**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 303 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2023

# ແຈ້ງການ

**ເຖິງ: ບັນດານັກສຶກສາທີ່ຮຽນຈົບຈາກສະຖານການສຶກສາຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ.**

**ເລື່ອງ: ການຮັບສະໝັກພະນັກງານ.**

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກົມຈັດຕັ້ງແລະພະນັກງານ ສະບັບເລກທີ 343/ທຫລ ລົງວັນທີ 12 ກໍລະກົດ 2021;
- ອີງໃສ່ຄວາມຮຽກຮ້ອງຕ້ອງຂອງໜ້າວຽກວິຊາສະເພາະຢູ່ ທະນາຄານແຫ່ງ ສປປ ລາວ.

ກົມຈັດຕັ້ງແລະພະນັກງານ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ທະນາຄານແຫ່ງ ສປປ ລາວ ມີຄວາມຕ້ອງການບັນຈຸພະນັກງານໃໝ່ ຈຳນວນ **02** ຕຳແໜ່ງງານ ຄືດັ່ງນີ້:

1. **ຕຳແໜ່ງງານຕັດຕໍ່ພາບ ແລະ ວີດີໂອ;**
2. **ຕຳແໜ່ງງານພິທີກອນ ຫຼື ໂຄສົກ.**

ມາດຕະຖານ ແລະ ເງື່ອນໄຂເບື້ອງຕົ້ນຂອງຜູ້ສະໝັກ ມີຄືດັ່ງນີ້:

**ກ. ມາດຕະຖານຂອງຜູ້ສະໝັກ:**

**1. ຕຳແໜ່ງງານຕັດຕໍ່ພາບ ແລະ ວີດີໂອ:**

1) ເພດຊາຍ ຫຼື ເພດຍິງ, ອາຍຸບໍ່ເກີນ **35 ປີ**;

2) ວຸດທິການສຶກສາຈົບຊັ້ນສູງຂຶ້ນໄປ ໃນສາຂາທີ່ກ່ຽວຂ້ອງ ແລະ ມີຄະແນນສະເລ່ຍ **(GPA) 2.50** ຂຶ້ນໄປ;

3) ມີຄວາມສາມາດ ໃນການນຳໃຊ້ໂປຣແກຣມອອກແບບ Adobe Premiere, After Affect, Photoshop, Audition, Final Cut ແລະ ອື່ນໆ;

4) ມີຄວາມສາມາດໃນການສ້າງ Video Motion Graphic ແລະ ອອກແບບກາໝາຍ (Logo);

5) ມີຄວາມຄິດສ້າງສັນ, ສາມາດຖ່າຍພາບ, ຕັດຕໍ່ພາບ ແລະ ວີດີໂອໄດ້;

6) ມີຄວາມຮູ້ດ້ານພາສາອັງກິດໃນລະດັບພື້ນຖານ;

7) ຖ້າມີປະສົບການ ຫຼື ມີຜົນງານການອອກແບບ ແລະ ຕັດຕໍ່ມາກ່ອນ ຈະຖືກພິຈາລະນາເປັນກໍລະນີພິເສດ.

**2. ຕຳແໜ່ງງານພິທີກອນ ຫຼື ໂຄສົກ:**

1) ເພດຊາຍ ຫຼື ເພດຍິງ, ອາຍຸບໍ່ເກີນ **35 ປີ**;

2) ບຸກຄະລິກກະພາບດີ, ມີຄວາມສາມາດໃນການສະແດງອອກ, ເວົ້າສຽງຈະແຈ້ງ, ມີທັກສະໃນການສື່ສານ-ປະຊາສຳພັນ;

3) ວຸດທິການສຶກສາຈົບປະລິນຍາຕີຂຶ້ນໄປ ສາຂາ ສື່ສານມວນຊົນ ຫຼື ສາຂາທີ່ກ່ຽວຂ້ອງ, ມີຄະແນນສະເລ່ຍ **(GPA) 2.50** ຂຶ້ນໄປ;

4) ມີຄວາມຮູ້ທາງດ້ານວຽກງານສື່ມວນຊົນ ແລະ ພາສາອັງກິດໃນລະດັບດີ;

5) ມີຄວາມສາມາດໃນການສ້າງ-ຂຽນແຜນການດຳເນີນລາຍການ ແລະ ມີຄວາມຄິດສ້າງສັນໃນການຈັດລາຍ ການເພື່ອດຶງດູດຜູ້ຊົມ;

6) ຖ້າມີປະສົບການ, ມີຜົນງານການຈັດທຳລາຍການໂທລະພາບໃດໜຶ່ງ ຫຼື ຮູ້ຈັກວຽກງານເສດຖະສາດ, ການເງິນ-ການທະນາຄານ ໂດຍພື້ນຖານ ຈະຖືກພິຈາລະນາເປັນກໍລະນີພິເສດ.

**ຂ. ເງື່ອນໄຂຂອງຜູ້ສະໝັກ:**

1. ມີຊີວະປະຫວັດການເຄື່ອນໄຫວຈະແຈ້ງ, ເປັນພົນລະເມືອງລາວ ບໍ່ເຄີຍຖືກສານຕັດສິນຕັດອິດສະຫຼະພາບ ແລະ ບໍ່ເຄີຍຖືກປະຕິບັດວິໄນ-ໃຫ້ອອກຈາກການຈັດຕັ້ງໃດໜຶ່ງມາກ່ອນ;

2. ສັດຊື່ບໍລິສຸດ, ມີມະນຸດສຳພັນດີ, ມີສຸຂະພາບແຂງແຮງ, ມີຫົວຄິດປະດິດສ້າງ ແລະ ຫ້າວຫັນໃນການປະຕິບັດວຽກງານ;

3. ມີຄວາມດຸໝັ່ນ, ອົດທົນ, ສາມາດເຮັດວຽກນອກໂມງລັດຖະການໄດ້ ແລະ ມີຄວາມສາມັກຄີກັບເພື່ອນຮ່ວມງານດີ.

**ຄ. ວິທີການສະໝັກ ແລະ ການຮັບສະໝັກເອກະສານການສະໝັກງານ:**

**1. ເອກະສານສະໝັກວຽກ ປະກອບດ້ວຍ:**

1) ໃບຄຳຮ້ອງຂໍສະໝັກວຽກ (ປະກອບດ້ວຍຕົນເອງ);

2) ໃບຊີວະປະຫວັດ 04 ໜ້າ ພ້ອມທັງ ເຊັນຢັ້ງຢືນຈາກຜູ້ປົກຄອງ ແລະ ເຊັນປະທັບຕາຈາກນາຍບ້ານທີ່ຕົນອາໃສ ຢູ່ (ສະບັບຕົ້ນ);

3) ສຳເນົາປະກາສະນິຍະບັດ ແລະ ໃບຄະແນນ (ເວລາຜູ້ສະໝັກມາຍື່ນເອກະສານໃຫ້ຖືປະກາສະນິຍະບັດ ແລະ ໃບຄະແນນສະບັບຕົ້ນມາຢັ້ງຢືນພ້ອມ);

4) ໃບຢັ້ງຢືນທີ່ຢູ່ (ສະບັບຕົ້ນ);

5) ໃບຢັ້ງຢືນຮັບປະກັນເຊັນຈາກຜູ້ປົກຄອງ ແລະ ນາຍບ້ານທີ່ຕົນອາໄສຢູ່ (ສະບັບຕົ້ນ);

6) ໃບກວດສຸຂະພາບຈາກໂຮງໝໍລັດ (ສະບັບຕົ້ນ);

7) ໃບແຈ້ງໂທດ (ສະບັບຕົ້ນ);

8) ໃບຢັ້ງຢືນການຜ່ານງານ ຫຼື ຝຶກອົບຮົມ ກ່ຽວກັບຕຳແໜ່ງງານທີ່ຕົນເອງສະໝັກງານ (ຖ້າມີ);

9) ຮູບສີຂະໜາດ 3X4 ຈຳນວນ 2 ໃບ.

- **ໝາຍເຫດ: ເອກະສານປະກອບຕ່າງໆແມ່ນມີ ອາຍຸບໍ່ໃຫ້ເກີນ 03 ເດືອນ, ຍົກເວັ້ນໃບຢັ້ງຢືນການຜ່ານງານ ຫຼື ຝຶກອົບຮົມ.**

**2.** ຜູ້ທີ່ມີຄວາມສົນໃຈຕ້ອງການສະໝັກວຽກ ໃຫ້ມາພົວພັນ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ທີ່ລະບຸຂ້າງເທິງ ເພື່ອຍື່ນສະໝັກດ້ວຍຕົນເອງ ຢູ່ ກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປ ລາວ (ສະຖານທີ່: ບ້ານຊຽງຍືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ) ເບີໂທລະສັບ: **021-213216;**

**3.** ໄລຍະເວລາຂອງການຮັບສະໝັກງານ ເລີ່ມແຕ່ວັນທີ **02-15 ສິງຫາ 2023;**

**4.** ສ່ວນວັນ, ເວລາ ແລະ ສະຖານທີ່ຂອງການສອບເສັງຕົວຈິງຈະແຈ້ງໃຫ້ຊາບຕາມພາຍຫຼັງ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງບັນດາທ່ານທີ່ມີຄວາມສົນໃຈ ເພື່ອຮັບຊາບຕາມເນື້ອໃນຈິດໃຈທີ່ລະບຸໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

ທະນາຄານແຫ່ງ ສ. ປ. ປ. ລ. ກົມຈັດຕັ້ງແລະພະນັກງານ

ພານຸສັກ ແກ່ນວິງພະຈັນ